

World Vison Laos Annual Report 2012

## MESSAGE FROM OUR NATIONAL DIRECTOR



2012 was a milestone year for the nation of Laos! Lao PDR celebrated its entry to the World Trade Organization; it hosted more than four dozen heads of state during the Asia Europe Meetings and, in 2012, it once again enjoyed strong economic growth of 8 per cent. Vientiane was beautified, further positioning Laos as one of the top tourist destinations in the world.

While we commend the Lao PDR for these achievements, World Vision recognises that advancement has not yet reached all Lao children. A UNICEF report found that 75 per cent of Lao children face severe deprivation from access to healthcare, sanitation, shelter or food. That is why World Vision, now into our fourth decade in Lao PDR, is more committed than ever to our goal of creating change for children.

In 2012, we saw many remarkable stories that highlighted how our partnership is making a difference for children. In Xiangdao village, 17 infants moved from being undernourished to nourished after their mothers learned better feeding and care practices. Twelve children in Khamteuy village returned to school following negotiations with parents, government officials and village leaders. Some 76 boys and girls were reunited with their families after being trafficked to neighbouring countries. Stories like these are being replicated across the more than 500 villages where World Vision works.

There is no doubt that Lao PDR is a country with tremendous potential. Its young population is a particular strength and World Vision is passionate to see that every child - even those from the most remote villages - can live life in all of its fullness. We are grateful for the generousity of the more than 40,000 donors from 11 countries that have supported our work and we are thankful to the Lao government for opening doors so that together we can bring hope to children.

As the new World Vision Laos National Director, I pray that we will see even greater results in 2013!

With blessings,

Amelia Merrick



## ຈົດໝາຍຈາກຜູ້ອຳນວຍການ

ໃນປີ 2012 ເປັນປີທີ່ມີເຫດການສຳຄັນຫລາຍເຫດການຢູ່ປະເທດລາວ! ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ມີການສະເຫລີມສະຫລອງການເຂົ້າເປັນສະມາຊິກຂອງອົງການຈຸຄ້າໂລກ ແລະ ທັງເປັນເຈົ້າພາບຕ້ອນຮັບແຂກຫລາຍກວ່າ 48 ຫົວໜ້າຄະນະຜູ້ແທນໃນຊ່ວງກອງປະຊຸມ ເອີລົບ ອາຊີ. ອີກຢ່າງໜຶ່ງ, ປີ 2012 ນີ້ປະເທດມີການຂະຫຍາຍໂຕຂອງເສດຖະກິດເພີ້ມຂື້ນເຖິງ 8%. ນະຄອນຫຼວງວຽງຈັນເປັນເມືອງທີ່ສວຍງາມ ແລະ ປະເທດລາວຖືກຍົກໃຫ້ເປັນປະເທດທີ່ໜ້າທ່ອງທ່ຽວທີ່ສຸດໃນໂລກ.

ໃນຄະນະທີ່ພວກເຮົາກຳລັງຍ້ອງຍໍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນຄວາມສຳເລັດເຫລົ່ານີ້. ອົງການ ສຸພະນິມິດໄດ້ຮັບຮູ້ວ່າຄວາມກ້າວໜ້າທີ່ຍັງບໍ່ທັນເຂົ້າເຖິງເດັກນ້ອຍລາວທັງໝົດ. ການລາຍງານຂອງອົງການ ຢູນິເຊບ (UNICEF) ພົບວາ 75% ຂອງເດັກນ້ອຍລາວທັງໝົດເຊິ່ງຍັງປະເຊີນໜ້າກັບສິ່ງທ້າທາຍໃນການເຂົ້າເຖິງດ້ານສຸຂະພາບ, ສຸຂະອານາໄມ ແລະ ທີ່ພັກອາໃສ ຫລືອາຫານ. ນີ້ຄືເຫດຜົນທີ່ອົງການ ສຸພະນິມິດ ໄດ້ສຸ່ມໃສ່ການຈັດຕັ້ງປະຕິບັດວຽກຢູ່ໃນລາວມາໄດ້ເກືອບ ສີ່ທົດສະວັດ, ເຊິ່ງເຮັດໃຫ້ມີຄວາມມຸ້ງໝັ້ນຫລາຍຂຶ້ນກວ່າເກົ່າເພື່ອນຳໄປສູ່ການປ່ຽນແປງຊີວິດການເປັນຢູ່ຂອງເດັກນ້ອຍ.

ໃນປີ 2012 ພວກເຮົາໄດ້ມີຫລາຍເລື່ອງທີ່ໜ້າສົນໃຈເຊິ່ງສະແດງໃຫ້ເຫັນວ່າຄູ່ຮ່ວມງານຂອງພວກເຮົາໄດ້ສ້າງຄວາມແຕກຕ່າງໃຫ້ແກ່ເດັກນ້ອຍ. ຢູ່ບ້ານແສງດາວ ມີເດັກນ້ອຍຈຳນວນ 17 ຄົນ ໄດ້ມີການປ່ຽນແປງຈາກຂາດສານອາຫານໄປສູ່ເດັກທີ່ໄດ້ຮັບສານອາຫານທີ່ຄົບຖ້ວນສົມບູນ ພາຍຫລັງທີ່ແມ່ໄດ້ເຂົ້າຮ່ວມຮຽນວິທີການລ້ຽງລູກ ແລະ ການເບິ່ງແຍ່ງເອົາໃຈໃສ່. ເດັກນ້ອຍຈຳນວນ 12 ຄົນໃນບ້ານຄຳເຕີຍ ໄດ້ກັບຄືນໄປເຂົ້າໂຮງຮຽນ ພາຍຫລັງທີ່ພະນັກງານໂຄງການ, ພະນັກງານລັດ ແລະ ອຳນາດການປົກຄອງບ້ານ ໄດ້ມີການປຶກສາຫາລືກັບຜູ້ປົກຄອງຂອງເດັກນ້ອຍດັ່ງກ່າວ. ແລະ ຍັງມີເດັກຍິງ-ຊາຍ ຈຳນວນ 76 ຄົນ ໄດ້ຖືກຊ່ວຍເຫຼືອໃຫ້ກັບຄືນຫາຄອບຄົວພາຍຫລັງທີ່ຖືກຕົວະຍົວະໄປຂາຍໃນປະເທດເພື່ອນບ້ານ. ເລື່ອງແບບນີ້ຍັງພົບເຫັນເລື້ອຍໆຢູ່ຫຼາຍກວ່າ 500 ບ້ານ ທີ່ນອນໃນພື້ນທີ່ການເຮັດວຽກຂອງ ອົງການ ສຸພະນິມິດ.

ບໍ່ຕ້ອງສົງໃສ່ເລີຍວ່າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດທີ່ມີທ່າແຮງທີ່ບົ່ມຊ້ອນໄວ້, ປະຊາກອນທີ່ໜຸ່ມນ້ອຍຄືກຳລັງອັນເຂັ້ມແຂງ. ແລະ ອົງການ ສຸພະນິມິດ ກໍ່ມີຄວາມກະຕືລືລົ້ນຢາກຈະເຫັນເດັກນ້ອຍທຸກຄົນທີ່ຢູເຂດຫ່າງໄກສອກຫລີກມີຊີວິດທີ່ຄົບຖ້ວນສົມບູນ. ພວກເຮົາຂໍຂອບໃຈມາຍັງຜູ້ໃຈບູນທີ່ໃຫ້ການສະໜັບສະໜູນທຶນຫລາຍກວ່າ 40,000 ຄົນໃນ 11 ປະເທດ ທີ່ໃຫ້ການສະໜັບສະໜູນວຽກງານຂອງພວກເຮົາ ແລະ ພ້ອມກັນນັ້ນ ພວກເຮົາຂໍຂອບໃຈ ມາຍັງພາກສ່ວນຄູ່ຮ່ວມງານລັດຖະບານລາວ ທີ່ເປີດປະຕູຕ້ອນຮັບພວກເຮົາ ເພື່ອນຳຄວາມຫວັງໄປສູ່ເດັກນ້ອຍລາວດ້ວຍກັນ.

ໃນຖານະທີ່ເປັນຜູ້ບໍລິຫານງານຄົນໃໝ່ ຂອງອົງການ ສຸພະນິມິດລາວ, ຂ້ອຍຂໍອາທິຖານໃຫ້ພວກເຮົາເຫັນຜົນສຳເລັດອັນຍິ່ງໃຫຍ່ໃນປີ 2013

ຂໍອວຍພອນທຸກທ່ານ

ຈາກ ອາເມເລຍ ເມີຣິກ

contact us

World Vision Lao PDR
333 Nong Bone Road
P.O. Box 312
Vientiane, Lao PDR 1005

Tel: 856 21 414 169, 452, 100
Fax: 856 21 451 101
Email: Laos@wvi.org
Web: www.wvi.org/laos

World Vision